ວາລະສານ

# ກະສິກຳ ແລະ ປ່າໄມ້

ປະຈຳ ອາທິດວັນທີ 08 ຫາ 12 ພຶດສະພາ 2023




ການນຳໃຊ້ກົນຈັກເຂົ້າໃນການຜະລິດເຂົ້າ

ຫ້ອງການກະຊວງກະສິກຳ ແລະ ປ່າໄມ້



# ການນຳໃຊ້ກົນຈັກ ເຂົ້າໃນການຜະລິດເຂົ້າ

ພາບ ແລະ ຂ່າວໂດຍ: ໜັງສືພິມວຽງຈັນໃໝ່

ໂຄງການສ້າງພື້ນຖານໂຄງລ່າງໃຫ້ແກ່ການຜະລິດເຂົ້າທັນສະໄໝຢູ່ ສປປ ລາວ ໄດ້ຮັບທຶນຊ່ວຍເຫຼືອຈາກແຜນງານກະສິກຳສາກົນ ສ. ເກົາຫຼີ (KOPIA) ໄດ້ຈັດຕັ້ງປະຕິບັດຢູ່ໃນ 3 ບ້ານເປົ້າໝາຍຂອງເມືອງ ປາກງື່ມ ນະຄອນຫຼວງວຽງຈັນ ຄື:ບ້ານນາຊາ, ບ້ານໝາກຮຽວ ແລະ ບ້ານໝາກນາວເໜືອ.

ສະນັ້ນ, ເພື່ອຮອງຮັບໃຫ້ແກ່ການຜະລິດເຂົ້າ ວັນທີ 6 ເມສາ 2023 ໂຄງການດັ່ງກ່າວ ໄດ້ເລີ່ມຈັດຕັ້ງປະຕິບັດປັບນາໄຮ່ນ້ອຍໃຫ້ເປັນນາໄຮ່ໃຫຍ່ໃຫ້ແກ່ກຸ່ມຊາວນາ ໃນບ້ານ ນາຊາ ໂດຍມີ ທ່ານ ເພັດມະນີແສງ ຊ້າງໄຊຍະສານ ຫົວໜ້າສູນຄົ້ນຄວ້າເຂົ້າ ແລະ ພືດເສດຖະກິດ ສະຖາບັນຄົ້ນຄວ້າກະສິກຳ-ປ່າໄມ້ ແລະ ພັດທະນາຊົນນະບົດ ກະຊວງກະສິກຳ ແລະ ປ່າໄມ້ ແລະ ທ່ານ ຊິນ ຊາງໂຮ ຜູ້ອຳນວຍການແຜນການກະສິກຳສາກົນ (KOPIA) ສ. ເກົາຫຼີ ພ້ອມດ້ວຍກຸ່ມຊາວນາບ້ານນາຊາເຂົ້າຮ່ວມ.

ທ່ານ ເພັດມະນີແສງ ຊ້າງໄຊຍະສານ ໃຫ້ສຳພາດວ່າ: ການຜະລິດເຂົ້າທີ່ນຳໃຊ້ເຄື່ອງຈັກທັນສະໄໝ ໃນການຍົກສະມັດຖະພາບຜົນຜະລິດເຂົ້າຕ້ອງເລີ່ມຈາກການປັບຈາກນາໄຮ່ນ້ອຍເປັນນາໄຮ່ໃຫຍ່ ເພື່ອຮອງຮັບການຮັບໃຊ້ແກ່ກົນຈັກ ເຊັ່ນ: ລົດໄຖນາ ລົດດຳນາ ແລະ ລົດກ່ຽວເຂົ້າ ເຊິ່ງຂະໜາດໄຮ່ນາທີ່ຕ້ອງການ ແລະ ເໝາະສົມໃຊ້ສຳລັບນຳໃຊ້ກົນຈັກປະມານ 2.000 ຕາແມັດຕໍ່ໄຮ່ ຫຼື



1 ເຮັກຕາປັບໃຫ້ໄດ້ 5 ໄຮ່ ແລະ ໄຮ່ໃຫຍ່ສຸດ 500 ຕາແມັດຕໍ່ໄຮ່ ເທົ່າກັບ 1 ເຮັກຕາປັບໃຫ້ໄດ້ສອງໄຮ່ ເພື່ອແນ່ໃສ່ການນຳໃຊ້ກົນຈັກຢ່າງມີປະສິດທິຜົນ ດັ່ງນັ້ນ, ໂຄງການຈຶ່ງໄດ້ລົງມາຈັດຕັ້ງປະຕິບັດຕົວຈິງໃນການປັບໄຮ່ນາ ໂດຍເລີ່ມຈາກພື້ນທີ່ນາບ້ານນາຊາກ່ອນ ຕໍ່ໄປແມ່ນ ບ້ານ ໜາກຮຽວ ແລະ ໜາກນາວເໜືອ ເຊິ່ງເປົ້າໝາຍຂອງໂຄງການຈະປັບນາໃນເນື້ອທີ່ 970 ເຮັກຕາ ໃນນີ້ປີໜຶ່ງຈະປັບປະມານ 190 ກວ່າເຮັກຕາຕໍ່ປີ. ນອກຈາກໃຫ້ທຶນຊ່ວຍເຫຼືອໃນການປັບນາໄຮ່ນ້ອຍເປັນນາໄຮ່ໃຫຍ່ແລ້ວ ທາງໂຄງການຍັງສະໜອງຝຸ່ນຄອກປັບຄວາມອຸດົມສົມບູນຂອງດິນ ໃນນີ້ໃຊ້ຝຸ່ນຄອກປະມານ 2 ໂຕນຕໍ່ເຮັກ ຕາຕໍ່ປີ ເຊິ່ງຈະສະໜອງໃຫ້ 3 ປີ ພ້ອມນັ້ນຈະສະໜອງແນວພັນເຂົ້າລຸ້ນສາມ ເປັນແນວພັນທີ່ປັບໂຕຕໍ່ສະພາບແວດລ້ອມ. ນອກນີ້, ໂຄງການມີເປົ້າໝາຍໃນການຍົກສະມັດຕະພາບເຂົ້າຈາກ 3 ໂຕນຕໍ່ເຮັກຕາທີ່ມີຜົນຜະລິດລວມຈຳນວນ 582 ໂຕນ ໃນປີ 2022 ເປັນ 4,5 ໂຕນຕໍ່ເຮັກຕາ ເຊິ່ງຈະໄດ້ຜົນຜະລິດລວມເປັນ 873 ໂຕນ ໃນປີ 2027.

ພາຍຫຼັງທີ່ຊາວນາປູກເຂົ້າຮອດລະດູການເກັບກ່ຽວແມ່ນຈະນຳໃຊ້ກົນຈັກກ່ຽວຈາກນັ້ນຈະນຳໄປອົບແຫ້ງ ແລ້ວຈະເຊີນເອົາບັນດາໂຮງສີເຂົ້າໃຫຍ່ມາປະມູນໂຮງສີໃດທີ່ໃຫ້ລາຄາສູງແມ່ນຂາຍໃຫ້ກັບໂຮງສີນັ້ນ ພ້ອມນັ້ນໄດ້ຕິດຕໍ່ໂຮງງານເບຍລາວ ທີ່ໄດ້ໃຫ້ຄວາມສົນໃຈ ແລະ ມີຄວາມຕ້ອງການເຂົ້າຈ້າວ 20.000 ໂຕນໃນການຜະລິດເບຍ ສຳລັບໂຄງການດັ່ງກ່າວມີໄລຍະການຈັດຕັ້ງປະຕິບັດແຕ່ປີ 2023-2027 ພາຍຫຼັງທີ່ໂຄງການສິ້ນສຸດແລ້ວເຄື່ອງກົນຈັກທັນສະໄໝທີ່ນຳໃຊ້ເຂົ້າໃນການຜະລິດເຂົ້າແມ່ນມອບໃຫ້ບ້ານເປັນຜູ້ຄຸ້ມຄອງ ແລະ ນຳໃຊ້ຮ່ວມກັນ.




**ຄະນະຮັບຜິດຊອບ:**
ທ່ານ ສີປະໄພ ໄຊສົງຄາມ
ທ່ານ ສີສະຫວາດ ທອນດາລາ

**ບັນນາທິການ:**
ທ່ານ ກິດຊະນະ ພົມມະຈັນ
ທ່ານ ໂຊລາ ສົມມະລາວົງ
ທ່ານ ນ. ທອງພຸດ ວົງພະຈັນ

**ຈັດໜ້າອອກແບບໂດຍ:**
ທ່ານ ນ. ສີອຳພອນ ໄຊຍະລາດ

ຕິດຕໍ່ ແລະ ລົງໂຄສະນາໄດ້ທີ່: ພະແນກໂຄສະນາ ແລະ ຂ່າວສານ, ຫ້ອງການກະຊວງ 021 410154;
website: www.maf.gov.la;
Facebook: ຂ່າວສານກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ;
Youtube: ລາຍການກະສິກຳ;ແລະ ປ່າໄມ້;